ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

ຫ້ອງການ

ເລກທີ 1755 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 04 ມິຖຸນາ 2025

# ໜັງສືແຈ້ງເຊີນປະມູນ ການຈັດຊື້ກະເບື້ອງ

1. ກະຊວງສຶກສາທິການ ແລະ ກິລາ ຂໍຖືເປັນກຽດຮຽນເຊີນບັນດາບໍລິສັດ, ຫ້າງຮ້ານ ທີ່ສົນໃຈ ແລະ ມີຄຸນວຸດທິທີ່ເໝາະສົມ ເຂົ້າຍື່ນຊອງປະມູນສຳລັບສະໜອງກະເບື້ອງ ເພື່ອສະໜອງໃຫ້ທ້ອງຖິ່ນ ໃນຂອບເຂດທົ່ວປະເທດ ໄລຍະເວລາການຈັດສົ່ງພາຍໃນ 03 ເດືອນ ພາຍຫຼັງທີ່ເຊັນສັນຍາ.
2. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກ້ວາງພາຍໃນປະເທດ ທີ່ໄດ້ກຳນົດໄວ້ໃນ ກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງ ປະຕິບັດກົດໝາຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດ ທີ່ມີຄຸນນະວຸດທິເໝາະສົມ ສາມາດເຂົ້າຮ່ວມແຂ່ງຂັນປະມູນໄດ້;
4. ບໍລິສັດ ທີ່ມີຄຸນນະວຸດທິເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນ ແລະ ເຂົ້າເບິ່ງເອກະສານປະມູນທີ່ ພະແນກຄຸ້ມຄອງຊັບສິນຂອງລັດ, ກົມການເງິນ, ກະຊວງສຶກສາທິການ ແລະ ກິລາ ໂທລະສັບ/ແຟັກ: 021 217 206 ຕາມວັນເວລາ ລັດຖະການ;
5. ເອກະສານປະມູນຄົບຊຸດທີ່ເປັນພາສາລາວ ສາມາດຊື້ໄດ້ ໂດຍຜູ້ທີ່ສົນໃຈປະມູນ ຍື່ນໜັງສືສະເໜີຫາ ຫຼື ສາມາດສອບຖາມລາຍລະອຽດໄດ້ທີ່ ພະແນກຄຸ້ມຄອງຊັບສິນຂອງລັດ, ກົມການເງິນ, ກະຊວງສຶກສາທິການ ແລະ ກິລາ, ຖະໜົນເລກ 1 ລ້ານຊ້າງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ໂທລະສັບ/ແຟັກ: 021 217 206, ເລີ່ມແຕ່ວັນທີ 04 ມິຖຸນາ 2025 ຕາມວັນເວລາລັດຖະການ, ໃນລາຄາ 1,000,000 ກີບ; ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ ແລະ ວິທີການຊຳລະຕ້ອງຈ່າຍເປັນເງິນສົດ;
6. ຊອງປະມູນຕ້ອງສົ່ງທີ່ຫ້ອງປະຊຸມ 405 ກະຊວງສຶກສາທິການ ແລະ ກິລາ ກ່ອນເວລາ 10:00 ໂມງ ຂອງ ວັນທີ 08 ກໍລະກົດ 2025. ຈະບໍ່ອະນຸຍາດສົ່ງຊອງປະມູນມາທາງເອເລັກໂຕຼນິກ, ຊອງປະມູນທີ່ສົ່ງຊ້າກ່ອນເວລາທີ່ກຳນົດໄວ້ ຈະບໍ່ຮັບເອກສານປະມູນ ແລະ ສົ່ງຄືນ ໂດຍບໍ່ມີການເປີດຊອງ, ຊອງປະມູນທຸກໆຊອງ ຈະໄດ້ເປີດໃນເວລາ 10:00 ໂມງ ຂອງວັນທີ 08 ກໍລະກົດ 2025 ໂດຍຊ່ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມ;
7. ທຸກໆຊອງປະມູນຕ້ອງໄດ້ປະກອບໜັງສືຄ້ຳປະກັນການປະມູນດ້ວຍກຽດ ຫຼື ໜັງສືຄ້ຳປະກັນການປະມູນຈາກທະນາຄານ ຊຶ່ງມູນຄ່າການຄ້ຳປະກັນບໍ່ໃຫ້ຫຼຸດ 2% (ສອງສ່ວນຮ້ອຍ) ຂອງລາຄາປະມູນມາພ້ອມ.

ເຊັນແທນ ຫົວໜ້າຫ້ອງການ

ກະຊວງສຶກສາທິການ ແລະ ກິລາ ຫ້ອງການ

ພັນມະແສງ ທິບພະວົງ